## ໂຮງຮຽນວັນອາທິດ
## ວັນອາທິດ ທີ 06 ເດືອນມີນາ 2022 (03-06-2022 )

---

## ຊີວິດທີ່ຖ່ອມຕົວລົງຮັບໃຊ້

*ເມື່ອເວົ້າເຖິງວິຣະບຸຣຸດທ່ານຄິດເຖິງຄຸນສົມບັດລັກສນະເປັນແບບໃດ?*

**ຈຸດສຳຄັນໃນບົດຮຽນ:** ພວກເຮົາສະທ້ອນໃຫ້ເຫັນພຣະຄຣິດ ເມື່ອພວກເຮົາຮັບໃຊ້ຄົນອື່ນດ້ວຍຄວາມຖ່ອມຕົວ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຂ້າພະເຈົ້າໄດ້ອ່ານໜັງສືຈຳນວນຫຼາຍກ່ຽວກັບເຣື່ອງກະສັດ, ນັກຕໍ່ສູ້, ແລະການສູ້ຮົບໃນສມັຍກາງ. ຂ້າພະເຈົ້າໄດ້ຄົ້ນພົບວ່າການຈິນຕະນາການຂອງປື້ມມີແນວໂນ້ມທີ່ຈະຊີ້ໃຫ້ເຫັນຂໍ້ບົກຜ່ອງພື້ນຖານຂອງມະນຸດ. ໃນຖ້ອຍຄຳທີ່ສົມມຸດຖານເຫຼົ່ານີ້, ກະສັດທີ່ແຂງແຮງຈະທຳລາຍຄົນທີ່ອ່ອນແອ. ແຜ່ນການທີ່ດີທີ່ສຸດຈະໄດ້ໄຊຊະນະ. ແລະສິ້ນສຸດລົງເຖິງການຮັບໃຊ້ທີ່ໜ້າຢ້ານ.

ແນ່ນອນ, ພວກເຮົາບໍ່ໄດ້ຢູ່ໃນເວລາຂອງນັກຕໍ່ສູ້ແລະກະສັດ, ແຕ່ພວກເຮົາຍັງຢູ່ໃນໂລກທີ່ມີຜູ້ເຂັ້ມແຂງມັກຈະຂົ່ມເຫັງແທນທີ່ຈະສນັບສນູນ. ໃນໂລກທີ່ແທ້ຈິງ, ຫຼາຍຄົນທີ່ຢູ່ໃນຕຳແໜ່ງອຳນາດນັ້ນໄດ້ໃຊ້ມັນເປັນເຄື່ອງມືຂົ່ມເຫັງ. ແຕ່ຜູ້ທີ່ເຂັ້ມແຂງທີ່ສຸດໃນປວັດຕິສາດໄດ້ວາງຕົວຢ່າງທີ່ແຕກຕ່າງຈາກນັ້ນ. ພຣະເຢຊູໄດ້ເດີນເທິງແຜ່ນດິນໂລກດ້ວຍພລັງອຳນາດຂອງພຣະເຈົ້າເອງ, ແຕ່ພຣະອົງບໍ່ໄດ້ເອົາຊະນະ, ຂ້າ, ຫຼືທຳໃຫ້ພ່າຍແພ້. ພຣະອົງມີອຳນາດທີ່ໂລກບໍ່ເຄີຍເຫັນ, ແຕ່ພຣະອົງໄດ້ໃຊ້ອຳນາດນັ້ນເພື່ອຮັບໃຊ້.

ນັ້ນແມ່ນເປັນວິທີທາງຂອງພວກເຮົາເຊັ່ນກັນ. ເນື່ອງຈາກການເຊື່ອມຕໍ່ກັບພຣະຄຣິດເຮັດໃຫ້ພວກເຮົາມີໂອກາດຢ່າງຫຼວງຫຼາຍ, ແລະນັບຕັ້ງແຕ່ການເປັນເໝືອນຢ່າງພຣະເຢຊູໝາຍຄວາມວ່າການກາຍເປັນຄົນທີ່ພຣະເຈົ້າຕ້ອງການໃຫ້ພວກເຮົາເປັນ, ດັ່ງນັ້ນພວກເຮົາຄວນຮັກສາຄວາມຖ່ອມຕົວ, ພຣະເຈົ້າແຫ່ງຟ້າສວັນໄດ້ບັງເກີດໃນເນື້ອໜັງມະນຸດແລະຮັບໃຊ້ໂລກ. ແລະພວກເຮົາໄດ້ສະທ້ອນພຣະລັກສນະຂອງພຣະຄຣິດຢ່າງເຕັມທີ່ເມື່ອເຮົາໄດ້ຮັບໃຊ້ດ້ວຍຄວາມຖ່ອມໃຈ.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

**<u>ສຶກສາພຣະຄັມພີ</u>**

### 1. ໂຢຮັນ 13:3-5

*3. ພຣະເຢຊູຊົງຊາບວ່າ ພຣະບິດາໄດ້ຊົງປະທານສິ່ງທັງປວງໃຫ້ຢູ່ໃນພຣະຫັດຂອງພຣະອົງ ແລະຊົງຊາບວ່າພຣະອົງສະ*
*ເດັດມາຈາກພຣະເຈົ້າ ແລະຈະສະເດັດເມືອຫາພຣະເຈົ້າ. 4. ພຣະອົງຊົງລຸກຂຶ້ນຈາກການຮັບປະທານອາຫານ, ຊົງຖອດ*
*ເຄື່ອງທົງຊັ້ນນອກອອກວາງໄວ້, ແລະຊົງເອົາຜ້າເຊັດຕົວມາຮັດແອວຂອງພຣະອົງ. 5. ພຣະອົງຊົງຖອກນ້ຳໃສ່ອ່າງແລ້ວຊົງ*
*ຕັ້ງຕົ້ນລ້າງຕີນຂອງພວກສາວົກ ແລະເຊັດດ້ວຍຜ້າຮັດແອວນັ້ນ.*

ພຣະເຈົ້າໄດ້ລ້າງຕີນ. ພຣະເຈົ້າ-ພຣະເຈົ້າ-ໄດ້ເອົາຜ້າເຊັດໂຕມາຮັດແອວຂອງພຣະອົງ, ຊົງຖອກນ້ຳໃສ່ອ່າງ, ແລະໄດ້ລ້າງຕີນ, ນັ້ນມັນບໍ່ເປັນໜ້າເຊື່ອບໍ? ແນ່ນອນ, ເມື່ອພຣະເຈົ້າແຫ່ງຟ້າສວັນຢູ່ໃນສະພາບຮ່າງກາຍມະນຸດແລະດຳເນີນຊີວິດຢູ່ກັບມະນຸດທຳມະດາ, ແນ່ນອນມັນຈະນຳໄປສູ່ຂໍ້ສັງເກດທີ່ໂດດເດັ່ນ, ແຕ່ພຣະເຢຊູໄດ້ລ້າງຕີນຂອງສາວົກຂອງພຣະອົງນັ້ນຕ້ອງເປັນເຫດການທີ່ແປກປລາດກ່ວາການດຳເນີນຊີວິດຂອງພຣະອົງ.

*ຜູ້ທີ່ຖ່ອມຕົວມີຮູບຊົງຄືແນວໃດ?*

ຂໍ້ 3 ຊ່ວຍໃຫ້ພວກເຮົາຍອມຮັບຄວາມສຳຄັນຂອງຄວາມຮູ້ສຶກໃນເວລານີ້. ໂຢຮັນຊ່ວຍເຮົາໃຫ້ຊື່ນຊົມກັບການຮັບໃຊ້ນີ້ໂດຍການເຕືອນພວກເຮົາໃຫ້ຮູ້ວ່າພຣະເຢຊູນັ້ນມາຈາກໃສແລະຈະໄປໃສ. ເພື່ອບໍ່ໃຫ້ເຮົາປັກໃຈໃສ່ສິ່ງທີ່ພຣະເຢຊູເຮັດໃນເວລານີ້ຈົນລືມໄປວ່າພຣະອົງແມ່ນໃຜ. ແນ່ນອນພຣະອົງຮູ້. "ພຣະເຢຊູຮູ້ວ່າ-ພຣະອົງໄດ້ມາຈາກພຣະເຈົ້າ, ແລະພຣະອົງຈະສະເດັດກັບຄືນໄປຫາພຣະເຈົ້າ" (ຂໍ້ 3).

ພຣະເຢຊູຮູ້ສິດອຳນາດທີ່ພຣະອົງມີ. ແນ່ນອນພຣະອົງຮູ້, ດັ່ງທີ່ເຫຼົ່າສາວົກຂອງພຣະອົງໄດ້ເຮັດ, ການອັສຈັນທີ່ພຣະອົງສາມາດເຮັດໄດ້. ເຖິງ ພຣະກິດຕິຄຸນຂອງພຣະເຢຊູໃນພຣະທັມໂຢຮັນ. ພວກເຮົາເຫັນຫຼັກຖານທີ່ໜ້າອັສຈັນໃຈຂອງຄວາມຈິງທີ່ວ່າ "ພຣະບິດາໄດ້ມອບທຸກສິ່ງທຸກຢ່າງຢູ່ໃນມືຂອງພຣະອົງ." ພຣະເຢຊູໄດ້ລ້ຽງຄົນຫຼາຍກ່ວາຫ້າພັນຄົນໂດຍມີເຂົ້າຈີ່ຫ້າກ້ອນແລະປາສອງໂຕ (6:10-13). ພຣະເຢຊູຍ່າງເທິງໜ້ານ້ຳ (6:19-21). ພຣະເຢຊູປຸກລາຊະໂຣໃຫ້ເປັນຄືນມາຈາກຕາຍ (11: 41-44). ນັ້ນຄືສິ່ງທີ່ເປັນສິດອຳນາດຂອງພຣະເຈົ້າເບິ່ງຄືວ່າ, ທຸກສິ່ງທຸກຢ່າງໄດ້ຖືກມອບໄວ້ໃນມືຂອງພຣະເຢຊູຄຣິດ; ພຣະອົງຮູ້ດີ, ແລະພຣະອົງໄດ້ສຳແດງມັນໃຫ້ເຫັນ-ແຕ່ພຣະອົງໄດ້ສຳແດງໃຫ້ເຫັນໃນຄວາມຖ່ອມຕົວ.

ຂໍ້ 3 ຍັງສະແດງໃຫ້ເຫັນວ່າພຣະເຢຊູຮູ້ວ່າພຣະອົງມາຈາກໃສແລະພຣະອົງຈະກັບໄປໃສ. "ພຣະເຢຊູຮູ້ວ່າ…ພຣະອົງໄດ້ມາຈາກພຣະເຈົ້າ, ແລະພຣະອົງໄດ້ກັບຄືນໄປຫາພຣະເຈົ້າ." ພຣະທັມໂຢຮັນເລີ້ມຕົ້ນໂດຍການຊີ້ໃຫ້ເຫັນເຖິງຕົ້ນກຳເນີດອັນສູງສົ່ງຂອງພຣະເຢຊູ. "ເມື່ອຕົ້ນເດີມນັ້ນພຣະຄຳຊົງເປັນຢູ່ແລ້ວ ພຣະຄຳນັ້ນຊົງສະຖິດຢູ່ກັບພຣະເຈົ້າ ພຣະຄຳນັ້ນແຫຼະ, ຊົງເປັນພຣະເຈົ້າ. ເມື່ອຕົ້ນເດີມນັ້ນ ພຣະຄຳຊົງສະຖິດຢູ່ກັບພຣະເຈົ້າ. ພຣະເຈົ້າຊົງສ້າງສິ່ງທັງປວງຂຶ້ນມາໂດຍພຣະຄຳໃນບັນດາສິ່ງທີ່ເປັນມານັ້ນ ບໍ່ມີຈັກສິ່ງທີ່ເປັນມາໂດຍນອກຈາກພຣະຄຳ." (1:1-3). ພຣະເຢຊູສ້າງທຸກສິ່ງ. ພຣະເຢຊູມີສິດອຳນາດເໜືອທຸກສິ່ງ. ພຣະເຢຊູກຳລັງຈະສລະພຣະກາຍຕາຍເພື່ອຄວາມບາບຂອງໂລກ, ແລະເອົາຊນະຄວາມຕາຍໂດຍການຟື້ນຄືນພຣະຊົນ, ແລະສະເດັດກັບຄືນສູ່ສວັນເພື່ອປົກຄອງຕລອດໄປເປັນນິດ. ພຣະເຢຊູຮູ້ເຖິງສິ່ງກຳລັງຈະເກີດຂຶ້ນທັງໝົດນີ້, ແມ່ນດ້ວຍອຳນາດທັງໝົດທີ່ມີສິດອຳນາດ, ພຣະອົງໄດ້ເລືອກທີ່ຈະເຮັດຫັຍງໃນເວລານີ້ພຣະອົງໄດ້ລ້າງຕີນ. ມັນເປັນຕົວຢ່າງທີ່ບໍ່ໜ້າເຊື່ອ. ພວກເຮົາບໍ່ສາມາດທີ່ຈະຊອກຫາແບບຢ່າງຂອງການຮັບໃຊ້ທີ່ຖ່ອມຕົວລົງຫຼາຍກ່ວານັ້ນໄດ້. ພວກເຮົາຖືກເອີ້ນໃຫ້ເປັນເໝືອນກັບພຣະເຢຊູ. ພວກເຮົາໄດ້ຮັບສິດທິພິເສດໃນການເຊື່ອມຕໍ່ກັບພຣະເຈົ້າອົງທ່ຽງແທ້ພຣະອົງດຽວຜູ້ມີອຳນາດທຸກສິ່ງໃນພຣະທັດ. ແລະຖ້າພຣະເຢຊູສາມາດທຳງານສິ້ນນັ້ນໄດ້, ພວກເຮົາກໍສາມາດເຮັດວຽກນັ້ນໄດ້, ຖ້າພຣະເຢຊູສາມາດເສັຽສລະພຣະອົງເອງ, ພວກເຮົາສາມາດເຮັດໄດ້ເຊັ່ນດຽວກັນ. ເມື່ອພວກເຮົາເຫັນວ່າພຣະອົງໄດ້ຮັບໃຊ້ຜ່ານການມະຫັສຈັນຂອງພຣະອົງ, ຜ່ານການກະທຳທີ່ບໍ່ເຫັນແກ່ຕົວເຊັ່ນນີ້ໃນໂຢຮັນບົດ 13, ແລະໃນທີ່ສຸດຜ່ານການຕາຍຂອງພຣະອົງເທິງໄມ້ກາງແຂນ, ພວກເຮົາໄດ້ຮັບການປ່ຽນແປງ, ແລະພວກເຮົາຖືກກະຕຸ້ນໃຫ້ຢາກເປັນເໝືອນຢ່າງພຣະອົງ. ຜ່ານທາງ ພຣະເຢຊູ, ພວກເຮົາມີຄວາມສຸກໃນການຮັບໃຊ້ຄົນອື່ນດ້ວຍຄວາມຖ່ອມຕົວ.

## 2 ໂຢຮັນ 13:6-10

*6. ພຣະອົງໄດ້ສະເດັດມາເຖິງຊີໂມນເປໂຕ ແລະລາວໄດ້ທູນພຣະອົງວ່າ, "ນາຍເຈົ້າເອີຍ, ທ່ານຈະລ້າງຕີນຂອງຂ້ານ້ອຍຫຼື." 7. ພຣະເຢຊູຊົງຕອບລາວວ່າ, "ສິ່ງທີ່ເຮົາເຮັດໃນເວລານີ້ທ່ານຍັງບໍ່ຮູ້ເລື່ອງ ແຕ່ພາຍຫລັງທ່ານຈະເຂົ້າໃຈ." 8. ເປໂຕຈຶ່ງທູນວ່າ, "ທ່ານຈະລ້າງຕີນຂອງຂ້ານ້ອຍບໍ່ໄດ້ຈັກເທື່ອ" ພຣະເຢຊູຊົງຕອບວ່າ, "ຖ້າເຮົາບໍ່ລ້າງທ່ານ ທ່ານຈະມີສ່ວນໃນເຮົາບໍ່ໄດ້." 9. ຊີໂມນເປໂຕທູນວ່າ, "ນາຍເຈົ້າເອີຍ, ບໍ່ແມ່ນແຕ່ຕີນເທົ່ານັ້ນ ແຕ່ຂໍລ້າງມືແລະຫົວຂອງຂ້ານ້ອຍເໝືອນກັນ." 10. ພຣະເຢຊູຊົງກ່າວຕໍ່ເປໂຕວ່າ, "ຜູ້ທີ່ອາບນ້ຳແລ້ວບໍ່ຈຳເປັນລ້າງຕົວອີກ ລ້າງແຕ່ຕີນເທົ່ານັ້ນ ເພາະສະອາດໝົດທັງຕົວແລ້ວພວກທ່ານ*

*ກໍສະອາດແລ້ວແຕ່ບໍ່ແມ່ນທຸກຄົນ.”*

ຂ້າພະເຈົ້າໄດ້ເຕີບໃຫຍ່ຢູ່ໃນໂບດທີ່ມີການປະຕິບັດການລ້າງຕີນ. ສ່ວນຫຼາຍແລ້ວ, ເມື່ອຄຣິສຈັກໄດ້ມີການແບ່ງປັນເຣື່ອງການຮັບປະທານອາຫານຄ່ຳຂອງອົງພຣະຜູ້ເປັນເຈົ້າ. ພວກເຮົາຈະເຮັດຕາມມານັ້ນໂດຍການລ້າງຕີນຂອງກັນແລະກັນ. ມັນເປັນການເຕືອນໃຈຢ່າງຊັດເຈນກ່ຽວກັບຕົວຢ່າງຂອງພຣະເຢຊູ. ຂນະທີ່ຍັງເປັນເດັກຢູ່, ພໍ່ຂອງຂ້າພະເຈົ້າໄດ້ລ້າງຕີນຂ້າພະເຈົ້າ; ທ່ານຍັງເປັນຜູ້ອຳນວຍການຂອງໂຮງຮຽນຂອງຂ້າພະເຈົ້າ. ເພື່ອນຮ່ວມຊັ້ນ ປ 5 ຂອງຂ້າພະເຈົ້າ ເປັນນັກຮຽນທີ່ວ່ອງໄວທີ່ສຸດທີ່ຂ້າພະເຈົ້າໄດ້ຮູ້ຈັກ. ໄດ້ລ້າງຕີນຂ້າພະເຈົ້າ. ນຶ່ງໃນສິດຍາພິບານຍັງໄດ້ລ້າງຕີນຂ້າພະເຈົ້າຄັ້ງນຶ່ງ. ໃນເວລານັ້ນຂ້າພະເຈົ້າຄິດວ່າ, ຕອນນີ້ບໍ່ມີການລ້າງຕີນໃດທີ່ສູງສຸດກ່ວານີ້ສຳລັບຂ້າພະເຈົ້າ. ຂ້າພະເຈົ້າໄດ້ຮັບການເຊັດດ້ວຍຜ້າເຄື່ອງນຸ່ງຂອງຜູ້ຊາຍນັ້ນ.

ປະສົບການຂອງເປໂຕໄດ້ເຮັດໃຫ້ຂ້າພະເຈົ້າອັບອາຍ. ຕີນຂອງທ່ານບໍ່ໄດ້ຖືກລ້າງດ້ວຍອຳນວຍການໂຮງຮຽນ, ຫຼືສິດຍາພິບານ. ການລ້າງຕີນທີ່ທ່ານໄດ້ຮູ້ແລ້ວວ່າພຣະເມຊີອາໄດ້ເປັນຜູ້ລ້າງຕີນຂອງທ່ານ(ມັດທາຍ 16:16). ຖ້າພວກເຮົາຍັງສະກິດໃຈກັບຮູບພາບຂອງພຣະເຈົ້າໄດ້ລ້າງຕີນ, ພວກເຮົາບໍ່ໄດ້ເປັນຢ່າງນັ້ນພຽງຜູ້ດຽວ. ເປໂຕໄດ້ຕໍ່ວ່າຢ່າງເອົາເປັນເອົາຕາຍ, ເປໂຕບໍ່ໄດ້ຍິນຍອມໃຫ້ລ້າງຕີນໃຫ້. ແຕ່ມັນມີຄວາມຮູ້ສຶກດີຫຼາຍກ່ວາຖ້າທ່ານໄດ້ເປັນຜູ້ລ້າງຕີນຂອງພຣະເຢຊູ. ນັ້ນຄືຄວາມຮູ້ສຶກທັມມະດາຂອງເປໂຕ, ທ່ານຢືນຢັນຢູ່ດ້ວຍຖ້ອຍຄຳຕໍ່ວ່າ: “ນາຍເຈົ້າເອີຍ, ທ່ານຈະລ້າງຕີນຂ້ານ້ອຍບໍ່ໄດ້ຈັກເທື່ອ.”(ຂໍ້ 8).

ການຕໍ່ວ່າການລ້າງຕີນຂອງເປໂຕເຮັດໃຫ້ພຣະເຢຊູໄດ້ບອກວ່າພຣະອົງສາມາດໃຫ້ອະພັຍຄົນບາບແລະເຮັດໃຫ້ພວກເຂົາພົ້ນຈາກການບາບໄດ້. ເຊັ່ນດຽວກັນທີ່ພຣະເຢຊູໄດ້ຖ່ອມຕົວລົງແລະຮັບເອົາການລ້າງຕີນຂອງຜູ້ຮັບໃຊ້, ພຣະອົງໄດ້ຖ່ອມຕົວລົງຕື່ມອີກໂດຍການຮັບເອົາຄວາມບາບຂອງພວກເຮົາເປັນຂອງພຣະອົງແລະຕາຍເທິງໄມ້ກາງແຂນ.

ຄວາມຖ່ອມຕົວຂອງພຣະຄຣິດບໍ່ພຽງແຕ່ເປັນຕົວຢ່າງອັນຍິ່ງໃຫຍ່ທີ່ສຸດຂອງສິດອຳນາດທີ່ຖືກນຳໃຊ້ເພື່ອຮັບໃຊ້ຄົນອື່ນ, ແຕ່ມັນໄດ້ນຳເອົາຜົນປໂຍດທີ່ປະທັບໃຈແລະມີສະງ່າຣາສີທີ່ສຸດຂອງການຮັບໃຊ້ຄົນອື່ນທີ່ໂລກບໍ່ເຄີຍຮູ້. ການກະທຳທີ່ຖ່ອມຕົວຂອງພຣະເຢຊູໃນການສິ້ນພຣະຊົນເທິງໄມ້ກາງແຂນເພື່ອພວກເຮົານັ້ນແມ່ນມີຄວາມເອື້ອເຟື້ອເພື່ອແຜ່, ເພາະພຣະອົງໄດ້ຊົງສເນີການໃຫ້ການອະພັຍ, ຄວາມບໍຣິສຸດ, ສິດເສລີພາບ, ຄວາມຊົມຊື່ນຍິນດີ, ແລະຊີວິດນິຣັນດອນ.

ຂອງປະທານແຫ່ງພຣະກິດຕິຄຸນແມ່ນເປັນການເຊື່ອມຕໍ່ກັບພຣະຄຣິດ, ການມີສາຍສຳພັນກັບພຣະຄຣິດ, ແລະສາມາດມີສ່ວນຮ່ວມຢູ່ດ້ວຍກັນ “ໃນ” ພຣະຄຣິດ. ພຣະເຢຊູ, ຜູ້ຮັບໃຊ້ທີ່ຖ່ອມຕົວ, ບໍ່ໄດ້ປ່ອຍໃຫ້ພວກເຮົາຈົມຢູ່ກັບຄວາມບາບເຄິ່ງນຶ່ງ. ພຣະອົງໃກ້ພວກເຮົາມີມາດຕະຖານອັນເຕັມທີ່ຂອງການໃຫ້ອະພັຍຂອງພຣະອົງເຮັດໃຫ້ພວກເຮົາໄດ້ຮັບການສຳລະລ້າງໃຫ້ສະອາດຢ່າງສົມບູນທຸກປະການ.

## 3 ໂຢຮັນ 13:14-16

*14. ເຫດສັນນັ້ນເຮົາຜູ້ເປັນນາຍ ແລະອາຈານຂອງພວກທ່ານໄດ້ລ້າງຕີນຂອງທ່ານ ພວກທ່ານກໍຄວນລ້າງຕີນຂອງກັນແລະກັນເໝືອນກັນ. 15. ດ້ວຍວ່າເຮົາໄດ້ວາງແບບຢ່າງໃຫ້ພວກທ່ານແລ້ວ ເພື່ອທ່ານຈະໄດ້ເຮັດເໝືອນດັ່ງເຮົາໄດ້ເຮັດຕໍ່ພວກທ່ານແລ້ວ. 16. ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ ຂ້າໃຊ້ບໍ່ຫ່ອນໃຫຍ່ກວ່ານາຍຂອງຕົນ ຜູ້ທີ່ຖືກໃຊ້ໄປບໍ່ຫ່ອນໃຫຍ່ກວ່າຜູ້ໃຊ້ຕົນໄປນັ້ນ.*

ພຣະເຢຊູໄດ້ສອນໃຫ້ເຫັນເຖິງຄຸນຄ່າຂອງການຮັບໃຊ້ໃນຂໍ້ 14-16: ພວກເຮົາເຫັນວ່າມີຄຸນຄ່າທີ່ຍິ່ງໃຫຍ່ໃນການຮັບໃຊ້ຂອງພຣະເຢຊູທີ່ຊົງກະທຳ. “ເຫດສັນນັ້ນເຮົາຜູ້ເປັນນາຍ ແລະອາຈານຂອງພວກທ່ານໄດ້ລ້າງຕີນຂອງທ່ານພວກທ່ານກໍຄວນລ້າງຕີນຂອງກັນແລະກັນເໝືອນກັນ.” ນີ້ເປັນການເຕືອນອີກຢ່າງນຶ່ງຂອງຜູ້ທີ່ທຳຄວາມສະອາດໃນການລ້າງຕີນໃນມື້ນັ້ນ. ມັນ

ແມ່ນອົງພຣະເຢຊູ, ຜູ້ເປັນເຈົ້ານາຍແລະອົງພຣະຜູ້ເປັນເຈົ້າຂອງພວກເຂົາ. ຄົນທີ່ມີສິດອຳນາດກຽດຕິຍົດທັງເປັນຜູ້ທີ່ຖືກຍອມຮັບ. ເປັນຜູ້ນຳທີ່ຖ່ອມຕົວລົງເພື່ອຮັບໃຊ້. ພຣະອົງໄດ້ຮຽກເອີ້ນໃຫ້ພວກເຮົາເຮັດຢ່າງນັ້ນເໝືອນກັນ. ພຣະເຢຊູສາມາດເວົ້າໄດ້ວ່າສຳລັບເຫດຜົນອື່ນນັ້ນບໍ່ມີເພາະວ່າເຮົາເປັນພຣະເຈົ້າ. ພຣະອົງໄດ້ສ້າງສ້າງພວກເຮົາ. ສິ່ງທີ່ພຣະອົງບອກໃຫ້ເຮັດແມ່ນສິ່ງທີ່ຄວນຕ້ອງເຮັດ. ເມື່ອຜູ້ຊົງສ້າງກ່າວ, ຜູ້ທີ່ຖືກສ້າງຂຶ້ນນັ້ນຄວນຟັງ. ໃນຊ່ວງຂອງລະຍະເວລານັ້ນ, ແຕ່ພຣະເຢຊູບໍ່ພຽງເອີ້ນໃຫ້ພວກເຂົາເຫຼົ່ານັ້ນເຮັດສິ່ງທີ່ພຣະອົງໄດ້ສັ່ງໄວ້. ພຣະອົງໄດ້ເອີ້ນໃຫ້ພວກເຮົາຄືກັນກັບພຣະອົງ. ພຣະເຢຊູໄດ້ສືບຕໍ່ການເປັນແບບຢ່າງໃນການຮັບໃຊ້ທີ່ຍິ່ງໃຫຍ່ທີ່ສຸດ: ພຣະອົງໄດ້ເສັຽສຣະພຣະກາຍຂອງພຣະອົງເອງ. ພຣະອົງຜູ້ທີ່ບອກກັບພວກເຮົາໃຫ້ຖ່ອມຕົວລົງ ໄດ້ຕາຍແທນບ່ອນທຸກຄົນທີ່ພຣະອົງໄດ້ສັ່ງໄວ້. ການຕາຍຂອງພຣະອົງໃນນາມຊື່ຂອງພວກເຮົາເຮັດໃຫ້ພວກເຮົາເປັນອິດສຣະ. ແຕ່ເຖິງແມ່ນວ່າ, ພຣະອົງບໍ່ພຽງແຕ່ເປັນຜູ້ສ້າງແລະຜູ້ຮັບໃຊ້. ໃນຂໍ້ 17, ພຣະອົງຊົງເຕືອນພວກເຮົາວ່າພຣະອົງນັ້ນເປັນພຣະພອນ, “ຖ້າພວກເຮົາຮູ້ເຂົ້າໃຈສິ່ງເຫຼົ່ານີ້, ທ່ານຈະໄດ້ຮັບພອນເມື່ອທ່ານນຳໃຊ້ມັນ.” ກ່ອນໜ້າທີ່ພຣະເຢຊູຈະໄປເຖິງໄມ້ກາງແຂນເພື່ອຈ່າຍຄ່າຣາຄາຄວາມບາບຂອງພວກເຮົາ, ພຣະອົງຊົງສັນຍາວ່າຈະເປັນພອນໃຫ້ແກ່ພວກເຮົາທີ່ຖ່ອມຕົວລົງເຊື່ອຟັງ. ຄວາມຈິງອັນນີ້ເປັນຄຳສັນຍາຂອງພຣະເຈົ້າທັງໝົດ.

➢ “ຖ້າເຈົ້າເອົາໃຈໃສ່ເຊື່ອຟັງບັນຍັດຂອງເຮົາແລ້ວ ຄວາມສຸກສົມບູນຂອງເຈົ້າຈະເປັນຄືກັບແມ່ນ້ຳແລະຄວາມຊອບທັມຂອງເຈົ້າຈະເປັນຄືກັບຄື້ນທະເລ” (ເອຊາຢາ 48:18).

➢ ຄົນທັງຫລາຍທີ່ຟັງພຣະຄຳຂອງພຣະເຈົ້າ ແລະຖືຮັກສາພຣະຄຳນັ້ນກໍເປັນສຸກຫລາຍກວ່ານັ້ນອີກ (ລູກາ11:28) ພຣະຄຣິດໄດ້ເອີ້ນພວກເຮົາໃຫ້ສະທ້ອນພຣະລັກສນະຂອງພຣະອົງໂດຍການຮັບໃຊ້ຄົນອື່ນດ້ວຍຄວາມຖ່ອມຕົວ. ພຣະອົງໄດ້ສ້າງແບບຢ່າງການຮັບໃຊ້ທີ່ສວຍສົດງົດງາມແລະຊັດເຈນນີ້ໄວ້ເປັນແບບຢ່າງໃຫ້ກັບພວກເຮົາ. ພຣະອົງໄດ້ເລົ້າໃຈເຮົາໂດຍການໃຫ້ພວກເຮົາຮູ້ການໄດ້ຮັບຜົນປໂຍດຈາກການຮັບໃຊ້ທີ່ມີຄວາມເມດຕາຂອງພຣະອົງ. ແລະພຣະອົງໄດ້ສັນຍາວ່າຈະເປັນພຣະພອນໃຫ້ແກ່ເຮົາເມື່ອເຮົາເຊື່ອຟັງ.

## ການນຳໃຊ້ໃນຊີວິດ

ພວກເຮົາໄດ້ສະທ້ອນພຣະລັກສນະຂອງພຣະຄຣິດເມື່ອພວກເຮົາຮັບໃຊ້ຄົນອື່ນດ້ວຍຄວາມຖ່ອມຕົວ. ຈົ່ງເລືອກຂໍ້ນຶ່ງໃນການນຳໃຊ້ຕໍ່ລົງໄປນີ້.

❖ **ສ້າງບັນຊີລາຍຊື່.** ຈົ່ງພິຈາລະນາວິທີການຂອງພຣະເຢຊູໄດ້ຮັບໃຊ້ທ່ານ, ແລະຂອບພຣະຄຸນພຣະອົງສຳລັບທຸກໆສິ່ງໃນເວລາຂອງທ່ານກັບພຣະອົງໃນອາທິດນີ້.

❖ **ຈົ່ງອະທິຖານສຳລັບຄົນທີ່ທ່ານສາມາດຮັບໃຊ້.** ຂໍໃຫ້ພຣະເຈົ້າປະທານຄົນນຶ່ງໃສ່ໃນໃຈຂອງທ່ານ ຜູ້ທີ່ທ່ານສາມາດຮັບໃຊ້. ພິຈາລະນາຫາວິທີທາງວ່າທ່ານຈະຮັບໃຊ້ເຂົາດ້ວຍວິທີໃດ, ແລະເຮັດສິ່ງນັ້ນໃນອາທິດນີ້.

❖ **ແບບຢ່າງການຮັບໃຊ້ໃນກຸ່ມ.** ໄປຮ່ວມຮັບໃຊ້ໃນກຸ່ມບໍ່ວ່າຈະເປັນກຸ່ມນ້ອຍຫຼືກຸ່ມໃຫຍ່, ກຸ່ມຄອບຄົວຫຼືກຸ່ມໝູ່ເພື່ອນ, ອ່ານພຣະທັມໂຢຮັນ 13:1-17, ແລະລ້າງຕີນຂອງກັນແລະກັນຫຼືເລືອກເອົາການຮັບໃຊ້ທີ່ຖ່ອມຕົວອື່ນໆທີ່ທ່ານສາມາດເຮັດນຳກັນ.

ອັນນີ້ບໍ່ເໝືອນກັບກະສັດຂອງສມັຍຍຸກກາງ, ພວກເຮົາຮັບໃຊ້ກະສັດຜູ້ທີ່ເລືອກທີ່ຈະຖ່ອມຕົວລົງເພື່ອຮັບໃຊ້ພວກເຮົາ. ຂໍໃຫ້ພຣະເຢຊູໃຫ້ພລັງແກ່ພວກເຮົາທີ່ຈະຖ່ອມຕົວເປັນຕົວແທນພຣະອົງຕໍ່ທຸກຄົນທີ່ຢູ່ອ້ອມຮອບພວກເຮົາໃນອາທິດນີ້.

**ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ** https://ulsb.org/sunday-school-2/ **ແປໂດຍ** VR.